ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ

ເລກທີ 268/ຄລສພ
ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2023

# ຄຳສັ່ງ

## ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ

ເຖິງ: ຄະນະບໍລິຫານງານພັກທຸກຂັ້ນ ໃນທົ່ວປະເທດ.

- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI.
- ອີງຕາມ ມະຕິກອງປະຊຸມຄົບຄະນະ ຄັ້ງທີ 05 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI.
- ອີງຕາມ ການຕົກລົງໃນກອງປະຊຸມກົມການເມືອງ ຮ່ວມກັບ ຄະນະເລຂາທິການສູນກາງພັກ ຄັ້ງວັນທີ 04 ພະຈິກ 2022.
- ອີງຕາມ ໜັງສືສະເໜີຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 41/ຄຈສພ, ລົງວັນທີ 18 ມັງກອນ 2023.

ເພື່ອເຮັດໃຫ້ການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ທຸກຂັ້ນ ບັນລຸຕາມຈຸດປະສົງ, ລະດັບຄາດໝາຍ ແລະ ທັນຕາມກຳນົດເວລາ.

### ຄະນະເລຂາທິການສູນກາງພັກ ອອກຄຳສັ່ງ ດັ່ງນີ້:

**I. ຄວາມໝາຍສຳຄັນ ແລະ ຄວາມຈຳເປັນ ຂອງການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ.**

1. ພັກເຮົາ ໃນຖານະທີ່ເປັນແກນນຳໃນລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ມີພາລະກຳອັນໃຫຍ່ຫຼວງ ສືບຕໍ່ປະຕິບັດພາລະກິດປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ພາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ແລະ ສ້າງປະຖົມປັດໄຈ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ. ການດຳເນີນຊີວິດການເມືອງພາຍໃນຄະນະພັກ ແຕ່ລະຂັ້ນ ແມ່ນການທົບທວນໝາກຜົນການນຳພາປະຕິບັດມະຕິກອງປະຊຸມໃຫຍ່ ຂອງແຕ່ລະອົງຄະນະພັກ ໃນ 2 ປີເຄິ່ງຜ່ານມາ ແລະ ການປັບປຸງຕົນເອງຂອງຄະນະພັກ ເພື່ອປັບປຸງແກ້ໄຂບັນຫາທີ່ຍັງຄົງຄ້າງ, ຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງຄະນະພັກ ທຸກຂັ້ນ ດ້ວຍການຍົກລະດັບທິດສະດີ, ກຳແໜ້ນແນວທາງນະໂຍບາຍ, ມະຕິຄຳສັ່ງຂອງພັກ, ກຳແໜ້ນປົດຄຽນພຶດຕິກຳ ແລະ ປັບປຸງຕົນເອງ ຢູ່ເລື້ອຍໆ ເພື່ອແນໃສ່ເຮັດສຳເລັດພາລະກິດ ກໍຄືໜ້າທີ່ ທີ່ພັກ ແລະ ປະຊາຊົນມອບໝາຍໃຫ້.

2. ການເຜີຍແຜ່ຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຂອງຄະນະພັກ ແຕ່ລະຂັ້ນ ພວມເຂົ້າສູ່ໄລຍະກາງສະໄໝ ຊຶ່ງເປັນເວລາອັນເໝາະສົມ ເພື່ອດຳເນີນການຕີລາຄາຄືນຮອບດ້ານ ຕໍ່ໝາກຜົນທີ່ໄດ້ຮັບ ແລະ ສືບຕໍ່ດັດປັບບັນດາເນື້ອໃນ, ວິທີການ, ມາດຕະການ ໃນການປະຕິບັດຕໍ່ໜ້າ, ການດຳເນີນຊີວິດການເມືອງກາງສະໄໝ ຂອງຄະນະພັກແຕ່ລະຂັ້ນ ເປັນການສະຫຼຸບປະເມີນຄືນຄວາມຮັບຜິດຊອບການເມືອງ ຂອງຄະນະພັກ ແຕ່ລະຂັ້ນ ກໍຄືບັນດາສະຫາຍຄະນະພັກ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກ ຂັ້ນຕົນ ໃນໄລຍະຜ່ານມາ ຕາມຈິດໃຈສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໂດຍຕີລາຄາໃຫ້ເລິກເຊິ່ງແທດເຖິງຕົວຈິງ, ຍົກໃຫ້ເຫັນ ທັງດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ເພື່ອສືບຕໍ່ເສີມຂະຫຍາຍດ້ານຕັ້ງໜ້າ ແລະ ສຸມໃສ່ປັບປຸງແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງ ໃນຊຸມປີທ້າຍຂອງສະໄໝ ດ້ວຍຄວາມຕັ້ງໜ້າບຸກບືນສູ້ຊົນນຳພາຈັດຕັ້ງປະຕິບັດບັນດາຄາດໝາຍທີ່ກອງປະຊຸມໃຫຍ່ຂັ້ນຂອງຕົນວາງອອກ ໃຫ້ບັນລຸຜົນເປັນຈິງ.

3. ຜ່ານການດຳເນີນຊີວິດການເມືອງກາງສະໄໝຂອງຄະນະພັກ ຄັ້ງນີ້ ຈະເປັນພື້ນຖານ ເພື່ອສືບຕໍ່ປັບປຸງ, ເຊີດຊູສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ບັນດາຫຼັກການ ແລະ ທິດນຳກໍ່ສ້າງພັກ ຊຶ່ງກ່ອນອື່ນໝົດ ແມ່ນຫຼັກການລວມສູນປະຊາທິປະໄຕ, ຫຼັກການຕິຊົມຕົນເອງ ແລະ ຕິຊົມກັນ, ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆພາຍໃນພັກ ເຊັ່ນ: ຖືເບົາຕໍ່ການຝຶກຝົນຕົນເອງ, ປາກົດການເສື່ອມຄຸນປ່ຽນທາດ, ການຫັນປ່ຽນດ້ວຍຕົນເອງ, ພະຍາດອາດຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ, ການຝ່າຝືນລ່ວງລະເມີດ ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ ທີ່ພວມປາກົດຂຶ້ນຢ່າງແຜ່ຫຼາຍພາຍໃນການຈັດຕັ້ງພັກ ແລະ ສະມາຊິກພັກ. ສະນັ້ນ, ການດຳເນີນຊີວິດການເມືອງກາງສະໄໝຂອງຄະນະພັກ ແຕ່ລະຂັ້ນ ເປົ້າໝາຍສຸດທ້າຍ ແມ່ນເພື່ອປັບປຸງປົວແປງພາຍໃນພັກ, ແນໃສ່ສ້າງພັກເຮົາ ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**II. ຈຸດປະສົງ**

1. ເພື່ອສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອບົດຮຽນການນຳພາອັນດີງາມຂອງພັກ ໃນໄລຍະຜ່ານມາ, ປັບປຸງແກ້ໄຂຈຸດອ່ອນຂໍ້ບົກຜ່ອງ ແລະ ສິ່ງທ້າທາຍທົດສອບ ທີ່ເປັນໄພອັນຕະລາຍ ຕໍ່ພັກເຮົາ ທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ ດ້ວຍຈິດໃຈບຸກທະລຸ ແນໃສ່ຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນພັກ, ພາຍໃນຊາດ, ສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ເດັດດ່ຽວນຳພາປະຕິບັດສອງໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວສູ່ຈຸດໝາຍສັງຄົມນິຍົມ ຢ່າງໜັກແໜ້ນ.

2. ເພື່ອຕີລາຄາທົບທວນຄືນການນຳພາຈັດຕັ້ງປະຕິບັດບັນດາທິດທາງ, ເນື້ອໃນ, ຄາດໝາຍ ທີ່ກອງປະຊຸມໃຫຍ່ ຂັ້ນຂອງຕົນວາງອອກ ອັນໃດໄດ້ເຮັດມີຜົນສຳເລັດ ແລະ ອັນໃດຍັງຄົງຄ້າງ ເພື່ອສືບຕໍ່ນຳພາປະຕິບັດ ໃຫ້ບັນລຸຜົນຕາມໄດ້ກຳນົດໄວ້.

3. ເພື່ອກວດກາຄວາມຮັບຜິດຊອບການເມືອງ ຂອງບັນດາສະຫາຍໃນຄະນະບໍລິຫານງານພັກ ຕໍ່ກັບການນຳພາລວມ ແລະ ຄວາມຮັບຜິດຊອບຂອງບຸກຄົນໃນຄະນະພັກ ຕາມການແບ່ງງານ, ແບ່ງຄວາມຮັບຜິດຊອບ; ຊອກໃຫ້ເຫັນດ້ານຕັ້ງໜ້າ ທີ່ຈະເສີມຂະຫຍາຍ, ດ້ານອ່ອນຄົງຄ້າງ ທີ່ຈະໄດ້ແກ້ໄຂ; ປັບປຸງຍົກສູງຄວາມຮັບຜິດຊອບການ

ເມືອງ ກໍຄືການປະຕິບັດໜ້າທີ່ຂອງແຕ່ລະສະຫາຍ; ປະຕິບັດຫຼັກການ ຕໍານິຕິນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນພາຍໃນພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນຄະນະພັກ, ຍົກສູງນໍ້າໃຈຮັບຜິດຊອບ ແລະ ຄວາມເປັນແບບຢ່າງນໍາໜ້າຂອງຄະນະພັກ ເພື່ອເປັນໃຈກາງ-ຫຼັກແຫຼ່ງ ໃຫ້ແກ່ການປັບປຸງກໍ່ສ້າງພັກ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ.

4. ເພື່ອສ້າງຄວາມເປັນເອກະພາບ, ຄວາມຕັດສິນໃຈໃໝ່, ຄວາມເປັນເຈົ້າການຕັ້ງໜ້າບຸກບືນເຮັດແທ້ທໍາຈິງ ແລະ ຍົກສູງຄວາມຮັບຜິດຊອບ ຂອງຄະນະພັກ ແຕ່ລະຂັ້ນ ໃນການຄົ້ນຄວ້າກໍານົດທິດທາງ, ມາດຕະການ ປັບປຸງແກ້ໄຂບັນຫາການເລັ່ງຫາວຕົວຈິງໃນຄວາມຮັບຜິດຊອບ ຂອງຂະແໜງການ ແລະ ທ້ອງຖິ່ນ.

**III.ດ້ານເນື້ອໃນ, ວິທີການດໍາເນີນ ແລະ ເປົ້າໝາຍເຂົ້າຮ່ວມກອງປະຊຸມ.**

ກ. ດ້ານເນື້ອໃນ

**1.** ສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຂັ້ນຕົນ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງຂະແໜງການ ແລະ ທ້ອງຖິ່ນ, ຕິດພັນກັບການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ກາງສະໄໝ, ການປະຕິບັດ 02 ວາລະແຫ່ງຊາດ ຂອງຂະແໜງການ ແລະ ທ້ອງຖິ່ນ ຢ່າງຮອບດ້ານ, ຖືກຕ້ອງ, ພາວະວິໄສ, ນັບທັງດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບົດຮຽນທີ່ຖອດຖອນໄດ້. ພ້ອມນັ້ນ, ກໍໃຫ້ກໍານົດວິທີການສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນແຕ່ລະດ້ານ ຂອງອົງຄະນະພັກ ໃນຕໍ່ໜ້າ ໃຫ້ແທດກັບຄວາມອາດສາມາດບົ່ມຊ້ອນ, ກໍາລັງແຮງທີ່ມີ ແລະ ສາມາດປະຕິບັດໄດ້.

**2.** ທາບທາມຄວາມເຊື່ອໝັ້ນໄວ້ວາງໃຈຂອງສະມາຊິກພັກ ຕໍ່ບຸກຄົນໃນຄະນະບໍລິຫານງານພັກ ກາງສະໄໝຜ່ານມາ ເພື່ອເປັນຂໍ້ມູນພື້ນຖານສໍາຄັນ ໃນການເບິ່ງບັນຫາຂອງການຈັດຕັ້ງ ກໍຄືໃຫ້ແຕ່ລະສະຫາຍຄະນະພັກມີບ່ອນອີງ ເພື່ອປັບປຸງກໍ່ສ້າງຕົນເອງ.

**3.** ສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານພັກ ໃຫ້ລົງເລິກຕີລາຄາຕໍ່ການນໍາພາຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຂັ້ນຕົນ ໃນແຕ່ລະດ້ານ; ຕີລາຄາສະພາບຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຄວາມເປັນແບບຢ່າງນໍາໜ້າ ແລະ ຄວາມສາມັກຄີເປັນເອກະພາບ ຢູ່ພາຍໃນຄະນະພັກ, ຄວາມໄວ້ວາງໃຈຂອງສະມາຊິກພັກ, ພະນັກງານ ແລະ ຊັ້ນຄົນຕ່າງໆ ຕໍ່ການນໍາພາຂອງຄະນະພັກ ແລະ ບຸກຄົນໃນຄະນະພັກ; ຕີລາຄາແບບແຜນນໍາພາ ແລະ ວິທີເຮັດວຽກທັງກໍານົດມາດຕະການ ແລະ ວິທີແກ້ໄຂໃນຕໍ່ໜ້າ.

**4.** ສໍາຫຼວດບຸກຄົນໃນຄະນະບໍລິຫານງານພັກ ໃຫ້ເລັ່ງໃສ່ຕີລາຄາຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ ແລະ ແບບແຜນດໍາລົງຊີວິດ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ, ດ້ານແບບແຜນນໍາພາ ແລະ ວິທີເຮັດວຽກ ພ້ອມທັງກໍານົດມາດຕະການ ແລະ ວິທີປັບປຸງແກ້ໄຂໃນຕໍ່ໜ້າ.

**ຂ. ວິທີການດໍາເນີນ.**

**1.** ດໍາເນີນການທາບທາມຄວາມເຊື່ອໝັ້ນໄວ້ວາງໃຈ ຈາກສະມາຊິກພັກ ຕໍ່ບຸກຄົນໃນຄະນະພັກ ແມ່ນໃຫ້ປະຕິບັດກ່ອນດໍາເນີນກອງປະຊຸມຄົບຄະນະກາງສະໄໝ. ຊຶ່ງການທາບທາມ ແມ່ນປະຕິບັດດັ່ງນີ້:

1.1. ເຜີຍແຜ່ເຊື່ອມຊຶມກໍາແໜ້ນ ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບນີ້, ຄໍາແນະນໍາຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ.25../ຄຈສພ, ລົງວັນທີ.24../01./2023, ມາດຕະຖານຂອງພະນັກງານ

ນຳພາ-ຄຸ້ມຄອງ, ມາດຕະຖານສະມາຊິກພັກ, ຂໍ້ຫ້າມຂອງສະມາຊິກພັກ, ສິດ ແລະ ໜ້າທີ່ຂອງຄະນະພັກ ແຕ່ລະຂັ້ນ.

**1.2. ດຳເນີນການທາບທາມ.**

- ຜ່ານມາດຕະຖານ ຂອງພະນັກງານນຳພາ-ຄຸ້ມຄອງ;
- ຜ່ານລະບຽບການທາບທາມ;
- ດຳເນີນການທາບທາມ.

**2. ການດຳເນີນກອງປະຊຸມຄົບຄະນະກາງສະໄໝ.**

**2.1. ວາລະທີ 01: ການດຳເນີນກອງປະຊຸມເປີດກວ້າງ.**

- ກອງປະຊຸມ ຈະໄດ້ຜ່ານ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ ຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ອົງຄະນະພັກຂັ້ນຕົນ ກາງສະໄໝ ຕິດພັນກັບ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກາງສະໄໝ ແລະ ຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ, ແຜນພັດທະນາຂະແໜງການ ຂອງກະຊວງ-ອົງການ ກາງສະໄໝ.
- ຜ່ານ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ທິດທາງໃນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຂອງຄະນະພັກ ຂັ້ນຕົນ ເຄິ່ງສະໄໝໃນຕໍ່ໜ້າ.

**2.2. ວາລະທີ 02: ການດຳເນີນຊີວິດການເມືອງພາຍໃນຄະນະພັກ.**

- ຜ່ານ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ ຮ່າງບົດສຳຫຼວດການນຳພາລວມຂອງຄະນະພັກ ໃນກາງສະໄໝຜ່ານມາ ແລະ ວິທີແກ້ໄຂໃນຕໍ່ໜ້າ.
- ດຳເນີນການສຳຫຼວດບຸກຄົນໃນຄະນະພັກ.
- ຮັບຟັງຄຳເຫັນໄອ້ລົມຈາກຄະນະພັກ ຂັ້ນເທິງຖັດຕົນ.

**ຄ. ເປົ້າໝາຍເຂົ້າຮ່ວມກອງປະຊຸມ.**

ສຳລັບເປົ້າໝາຍເຂົ້າຮ່ວມກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນແມ່ນຈະມີຄຳແນະນຳສະເພາະ.

## IV. ວິທີຈັດຕັ້ງປະຕິບັດ.

1. ຄະນະພັກແຕ່ລະຂັ້ນ ສູນກາງພັກ ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບ ກະກຽມກອງປະຊຸມຄົບຄະນະກາງສະໄໝ ຂັ້ນຂອງຕົນ ແລະ ແບ່ງໃຫ້ແຕ່ລະສະຫາຍ ໃນຄະນະຮັບຜິດຊອບຊີ້ນຳການກະກຽມດ້ານຕ່າງໆ ໃຫ້ມີຄວາມເລິກເຊິ່ງ, ໜັກແໜ້ນ ແລະ ແທດກັບສະພາບຕົວຈິງ ເປັນຕົ້ນແມ່ນ: ການສະຫຼຸບຕີລາຄາຮອບດ້ານການປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ໃນກາງສະໄໝຜ່ານມາ ແລະ ທິດທາງວຽກງານຈຸດສຸມທີ່ຕ້ອງສູ້ຊົນປະຕິບັດ ໃນເຄິ່ງສະໄໝຕໍ່ໜ້າ; ບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກຂັ້ນຂອງຕົນ ແລະ ບົດເຈາະຈີ້ມການຂຽນບົດສຳຫຼວດຕົນເອງ ຂອງແຕ່ລະສະຫາຍຄະນະພັກ.

2. ຄະນະຮັບຜິດຊອບດຳເນີນກອງປະຊຸມຄົບຄະນະກາງສະໄໝ ກະກຽມສ້າງແຜນການດຳເນີນກອງປະຊຸມຄົບຄະນະພັກ ຂັ້ນຂອງຕົນ, ກະກຽມເອກະສານຕ່າງໆໃຫ້ເລິກເຊິ່ງ, ກຳນົດວິທີຈັດຕັ້ງປະຕິບັດໃຫ້ລະອຽດ, ແນະນຳຄະນະພັກ ແຕ່ລະຂັ້ນ ເຊື່ອມຊຶມ, ກຳແໜ້ນ ແລະ ມີຄວາມເປັນເອກະພາບສູງ ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້.

3. ກ່ອນຈະດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະພັກແຕ່ລະຂັ້ນ ແມ່ນໃຫ້ດຳເນີນການທາບ

ທາມຄວາມໄວ້ວາງໃຈ ຕໍ່ແຕ່ລະສະຫາຍ ໃນຄະນະບໍລິຫານງານພັກຂັ້ນຂອງຕົນ ໂດຍມີການເຂົ້າຮ່ວມຂອງຄະນະພັກຂັ້ນຂອງຕົນ ແລະ ພະນັກງານຫຼັກແຫຼ່ງ ຕາມເປົ້າໝາຍທີ່ກຳນົດໄວ້ (ຈະມີຄຳແນະນຳສະເພາະ).

4. ມອບໃຫ້ຄະນະຈັດຕັ້ງສູນກາງພັກ ສົມທົບ ຄະນະກວດກາສູນກາງພັກ ສ້າງນິຕິກຳກ່ຽວຂ້ອງ, ສ້າງແຜນການເຄື່ອນໄຫວ ແລະ ແຕ່ງຕັ້ງໜ່ວຍງານວິຊາການ ລົງຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດ ແລະ ລາຍງານຄະນະເລຂາທິການສູນກາງພັກ ເປັນແຕ່ລະໄລຍະ.

5. ການກະກຽມ ແລະ ດຳເນີນກອງປະຊຸມຄົບຄະນະກາງສະໄໝ ແມ່ນນຳໃຊ້ງົບປະມານຕາມແຜນອະນຸມັດປະຈຳປີ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ບົນພື້ນຖານການປະຢັດ.

6. ຜ່ານການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະພັກ ແຕ່ລະຂັ້ນ ເປັນຕົ້ນ ຂັ້ນກະຊວງ-ອົງການ ແລະ ທ້ອງຖິ່ນ ຫາກພົບເຫັນກໍລະນີຄະນະພັກ ມີການກະທຳຜິດ ຫຼື ລ່ວງລະເມີດກົດລະບຽບພັກ, ກົດໝາຍ ແລະ ລະບຽບການຕ່າງໆ ແມ່ນໃຫ້ຄະນະພັກ ຂັ້ນນັ້ນ ເປັນເຈົ້າການຄົ້ນຄວ້າວິທີການ, ມາດຕະການ ເພື່ອນຳສະເໜີຄະນະພັກຂັ້ນເທິງຖັດຕົນ ພິຈາລະນາແກ້ໄຂຢ່າງເດັດຂາດ ແລະ ເຂັ້ມງວດ.

7. ພາຍຫຼັງສຳເລັດການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ໃຫ້ສະຫຼຸບລາຍງານຕໍ່ຄະນະພັກຂັ້ນເທິງ ຮັບຊາບ ແລະ ມີທິດຊີ້ນຳໃນການແກ້ໄຂບັນຫາຕ່າງໆ ໃຫ້ທັນເວລາ.

ຕ. ຄະນະເລຂາທິການສູນກາງພັກ

ຜູ້ປະຈຳການ

ປອ ບຸນທອງ ຈິດມະນີ